ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ວຽງຈັນ ໂລຊິດສະຕິກ ພາກ ຈຳກັດ

ຖະໜົນ ກຳແພງເມືອງ ບ້ານ ໂພນທັນ ເມືອງ ໄຊເສດຖາ

ນະຄອນຫຼວງວຽງຈັນ

ເລກທີ ---049/ວລພ

ຂາເຂົ້າ ສຳນັກງານອົງການປົກຄອງ ນວ ໜ່ວຍງານບໍລິການປະຕູດຽວ
ເລກທີ: 4970
ວັນທີ: 31.10.2024

## ຫນັງສືສະເໜີ

**ຮຽນ:** ທ່ານ ເຈົ້າຄອງນະຄອນຫລວງວຽງຈັນທີ່ນັບຖືຢ່າງສູງ

**ເລື່ອງ:** ຂໍລາຍງານທີ່ດິນ ເຂດ 327 ເຮັກຕາ ຂອງ ບໍລິສັດ ວຽງຈັນ ໂລຊິດສະຕິກ ພາກ ຈຳກັດ ທັບຊ້ອນກັບດິນ ທ້າວ ພອນປະເສີດ.

- ອີງຕາມ ສັນຍາສຳປະທານ ລົງວັນທີ 03 ກໍລະກົດ 2020;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາເຂດພັດທະນາໂຄງການທ່ານົກ - ທ່ານາແລ້ງ ແລະ ເຂດໂລຈິສຕິກ ນະຄອນຫລວງວຽງຈັນ ເລກທີ 110/ຈນວ ລົງວັນທີ 23/2/2021;
- ອີງຕາມ ໃບຢັ້ງຢືນສິ່ງແວດລ້ອມເລກທີ 1491/ກຊສ.ກສລ ລົງວັນທີ 27/7/2021;
- ອີງຕາມ ໜັງສືຢັ້ງຢືນການຮັບຮອງແຜນຜັງລວມ ໂຄງການ ພັດທະນາ ທ່ານົກ - ທ່ານາແລ້ງ ແລະ ເຂດໂລຈິສຕິກ ເລກທີ 29858/ຍທຂ.ກຂສ ລົງວັນທີ 11 ທັນວາ 2020
- ອີງຕາມ ແຈ້ງການຂອງກົມທີ່ດິນເລກທີ 1231/ກຊສ.ກທດ ລົງວັນທີ 11/5/2021

ບໍລິສັດ ວຽງຈັນ ໂລຈິສຕິກພາກ ຈຳກັດ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານເຈົ້າຄອງຊາບວ່າ: ພາຍຫລັງໄດ້ຮັບອະນຸຍາດຈາກລັດຖະບານໃນການສຶກສາສຳຫລວດ ແລະ ອອກແບບໂຄງການ ພັດທະນາ ທ່ານົກ - ທ່ານາແລ້ງ ທາງບໍລິສັດ ສິດທີກໍ່ໄດ້ທຸ້ມເທທຶນຮອນ, ບຸກຄະລາກອນ ສຸມໃສ່ວຽກງານພັດທະນາໄດ້ສຳເລັດເປັນກ້າວໆເຊັ່ນ:

1. ສຳເລັດການສຶກສາສຳຫລວດ ແລະ ຮັບຮອງຂອບເຂດການພັດທະນາຕາມຂໍ້ຕົກລົງເລກທີ 110/ນວ ລົງວັນທີ 23.2.2021 ເນື້ອທີ່ 327 ເຮັກຕາ.
2. ສຳເລັດການວັດແທກພື້ນທີ່ດິນລັດເຂດ CY ແລະ ເຊື່ອມຕໍ່ຂົວມິດຕະພາບຕາມການມອບຮັບຂອງກົມລົດໄຟກະຊວງໂຍທາ 55 ເຮັກຕາ (ເຊົ່ານຳລັດ) ພື້ນທີ່ຂອບເຂດສຳປະທານທັງໝົດຕາມແຈ້ງການຂອງກົມທີ່ດິນ ສອງຕອນເທົ່າກັບ 382 ແມ່ນເງື່ອນໄຂນອນໃນພັນທະສັນຍາຂອງສັນຍາສຳປະທານ ມາດຕາ 30.
3. ຕອນດິນ 327 ເຮັກຕາ ພະແນກຊັບໄດ້ແບ່ງອອກເປັນ 13 ຕອນດິນ ອອກໃບຕາດິນລັດໃຫ້ແລ້ວ 11 ຕອນ. ຍັງ 02 ຕອນ ຄືຕອນທີ 6 ແລະ ຕອນທີ 8 ຕາມແຜນວາດທີ່ຕິດຂັດມານີ້.
4. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ເຫັນດີໃຫ້ກົມສິ່ງແວດລ້ອມອອກໃບຢັ້ງຢືນສິ່ງແວດລ້ອມ (ມາດຕະຖານ IFC) ໃຫ້ແກ່ບໍລິສັດ ວຽງຈັນໂລຈິສຕິກພາກ ຈຳກັດ ເນື້ອທີ່ທັງໝົດ 382 ເຮັກຕາ ເລກທີ 1491/ກຊສ.ກສລ ລົງວັນທີ 27/07/2021.

5. ໃບຮັບຮອງການກໍ່ສ້າງໂຄງລ່າງພື້ນຖານເຕັກ (FS) ເລກທີ 29858/ຍທຂ.ກຂສ ລົງວັນທີ 11 ທັນວາ 2020.

ທັງໝົດຂ້າງເທິງແມ່ນນິຕິກຳທີ່ຕິດພັນກັບສັນຍາສຳປະທານກັບລັດຖະບານ ແລະ ຍັງມີຫລາຍໆນິຕິກຳທີ່ອຳນວຍຄວາມສະດວກຕໍ່ການຈັດຕັ້ງປະຕິບັດໂຄງການທີ່ລັດຖະບານໃຫ້ເປັນບຸລິມະສິດ.

ມາຮອດວັນທີ 29/10/2024 ໄດ້ມີໜັງສືເຊີນເຂົ້າຮ່ວມປະຊຸມຂອງພະແນກຊັບພະຍາກອນທຳມະຊາດ ກ່ຽວກັບຕອນດິນຂອງທ້າວ ພອນປະເສີດ ອິນທະສອນ ທີ່ຕັ້ງຢູ່ບ້ານນາຄວາຍໃຕ້ວ່າທັບຊ້ອນກັບເຂດພັດທະນາຂອງ ບໍລິສັດ ວຽງຈັນໂລຈິສຕິກພາກ ຈຳກັດໃນຈຸດທີ 3 ຂອງຕອນດິນຕາມແຜັນຂອບເຂດ.ຕາມບົດລາຍງານຂອງພະແນກຊັບເລກທີ 9503/ພຊສ.ນວ ລົງວັນທີ 27/09/2024 ການລາຍງານມູນຄ່າຊົດເຊີຍ (ບໍ່ຖືກກັບຂໍ້ມູນຕົວຈິງ) ແລະ ຜ່ານມາບໍລິສັດຜູ້ພັດທະນາບໍ່ເຄີຍໄດ້ພົບປະ ແລະ ໄກ່ເກ່ຍກັບຜູ້ຖືກຜົນກະທົບຈັກເທື່ອ.

<u>**ຂໍ້ສະເໜີ:**</u>

1. ຂໍໃຫ້ທ່ານເຈົ້າຄອງ ກໍ່ຄືພາກສ່ວນກ່ຽວຂ້ອງຊ່ວຍພິຈາລະນາຕາມຂໍ້ມູນຫລັກຖານ ແລະ ຄວາມສຳຄັນຂອງການພັດທະນາ ແລະ ນິຕິກຳທີ່ຮັບຮອງຜ່ານມາ.
2. ທາງບໍລິສັດມີຄວາມຍິນດີປຶກສາຫາລືກັບຜູ້ໄດ້ຮັບຜົນກະທົບເພື່ອຊົດເຊີຍພື້ນທີ່ຫາທາງອອກຮ່ວມກັນ ໂດຍສັນຕິເພື່ອບໍ່ໃຫ້ກະທົບຕໍ່ໂຄງສ້າງ ແລະ ແຜນພັດທະນາທີ່ຕິດພັນກັບສັນຍາສຳປະທານ.
3. ອີງຕາມຂໍ້ຕົກລົງເລກທີ 326/ອກທລ ລົງວັນທີ 26 ສິງຫາ 2024 ແລະ ໜັງສືຂອງເຂດເສດຖະກິດພິເສດເລກທີ 1284/ຄຂສພ.ນວ ລົງວັນທີ 04/09/2024.

ຜ່ານການກວດກາແຕ່ທີ 9 ກັນຍາ 2024 ທາງອົງການກວດກາແຫ່ງລັດເຫັນໄດ້ຈຸດຄ້າງຄາທີ່ທາງພະແນກຊັບຍັງບໍ່ທັນອອກໃບຕາດິນໃຫ້ຕາມແຈ້ງການເລກທີ 1231/ກຊສ.ກທດ ລົງວັນທີ 11/05/2021 ຈຶ່ງໄດ້ອອກໜັງສືທາງລັດຖະການເລກທີ 967/ຫກ ລົງວັນທີ 29 ຕຸລາ 2024 ເຖິງພະແນກຊັບ. ( ກ່ອນອອກໜັງສືທາງລັດຖະການທາງອົງການກວດກາແຫ່ງລັດກໍ່ໄດ້ຮ້ອງພະແນກຊັບເຂົ້າຮ່ວມປະຊຸມຊີ້ແຈງແລ້ວ ).

ຂໍໃຫ້ທ່ານເຈົ້າຄອງຊຸກຍູ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເຕີມ. ເພື່ອໃຫ້ສຳເລັດບັນດານິຕິກຳຕາມການກວດກາ.

ຫວັງຢ່າງຍິ່ງວ່າຄົງໄດ້ຮັບການພິຈາລະນາຕາມເຫັນສົມຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ນະຄອນຫລວງວຽງຈັນ, ວັນທີ 31 OCT 2024

**ບໍລິສັດ ວຽງຈັນ ໂລຊິດສະຕິກ ພາກ ຈຳກັດ**

ບໍລິສັດ ວຽງຈັນ ໂລຊິດສະຕິກ ພາກ ຈຳກັດ VIENTIANE LOGISTICS PARK CO.,LTD ນະຄອນ ຫລວງ ວຽງຈັນ

ວຽງຄອນ ລິດທິໄຊ